ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 15 ພຶສຈິກາ 2026 (11-15-2026)

ເສັ້ນທາງສູ່ການໃຫ້ອະໄພ

ຈຸດສຳຄັນໃນບົດຮຽນ: ພວກເຮົາສາມາດໄດ້ຮັບການໃຫ້ອະໄພເພາະສິ່ງທີ່ພຣະເຢຊູໄດ້ກະທຳໄວ້ສຳລັບພວກເຮົາ.

ພຣະຄັມພີຕອບສນອງຕໍ່ຊີວິດ: ເບິ່ງທີ່ໂລກຂອງພວກເຮົາ

ການເວົ້າຄຳວ່າ "ຂ້ອຍໃຫ້ອະໄພເຈົ້າ" ນັ້ນ ແມ່ນງ່າຍຫຼາຍກວ່າການໃຫ້ອະໄພຢ່າງແທ້ຈິງ. ເຮົາອາດຈະຫາເຫດຜົນມາອ້າງເພື່ອສະໜັບສະໜູນຄວາມລັ່ງເລໃຈຂອງເຮົາ ໂດຍໃຫ້ເຫດຜົນວ່າ ເຮົາບໍ່ຕ້ອງການໃຫ້ໃຜມາເອົາປຽບເຮົາ. ເຮົາບໍ່ແມ່ນຄົນທີ່ຍອມໃຫ້ໃຜມາຢຽບຢ່ຳ ຫຼື ປະຕິບັດຕໍ່ເຮົາແນວໃດກໍໄດ້ຕາມໃຈມັກ. ອີກຢ່າງໜຶ່ງ, ເມື່ອມີຄົນມາທຳຮ້າຍຈິດໃຈເຮົາ, ມັນມັກຈະສົ່ງຜົນກະທົບທາງອາລົມຢ່າງໜັກໜ່ວງ. ເຮົາເຈັບປວດ, ແລະ ຖ້າເຫດການນັ້ນເກີດຂຶ້ນຊ້ຳອີກ ມັນກໍຈະຍິ່ງເຈັບປວດກວ່າເກົ່າ; ດັ່ງນັ້ນ ເຮົາຈຶ່ງເລືອກທີ່ຈະບໍ່ໃຫ້ອະໄພໃນທັນທີ. ຍິ່ງໄປກວ່ານັ້ນ, ເຮົາອາດຈະຄິດຫາເຫດຜົນວ່າ ການໃຫ້ອະໄພໄວເກີນໄປ ອາດຖືກຕີຄວາມໝາຍໄດ້ວ່າເປັນການຍອມຮັບ ຫຼືສະໜັບສະໜູນພຶດຕິກຳທີ່ບໍ່ດີນັ້ນ. ເຮົາບໍ່ຕ້ອງການທີ່ຈະເປັນຜູ້ສົ່ງເສີມໃຫ້ວົງຈອນແຫ່ງການກະທຳຜິດ, ການຂໍໂທດ, ການໃຫ້ອະໄພ, ແລະ ການກັບໄປເຮັດຜິດຊ້ຳອີກນັ້ນ ດຳເນີນຕໍ່ໄປເລື້ອຍໆ. ເມື່ອເຮົາມອງການໃຫ້ອະໄພໃນລັກສະນະນີ້, ມັນຈຶ່ງກາຍເປັນຂະບວນການໜຶ່ງ ທີ່ເລີ່ມຕົ້ນດ້ວຍການເວົ້າຄຳວ່າ "ໃຫ້ອະໄພ" ອອກມາ, ແຕ່ມັນຈະຍັງບໍ່ຖືວ່າສຳເລັດສົມບູນຈົນກວ່າຜູ້ທີ່ເຄີຍທຳຮ້າຍເຮົາຈະສາມາດສ້າງຄວາມເຊື່ອໃຈໃຫ້ກັບຄືນມາໄດ້ໂດຍຜ່ານການປ່ຽນແປງພຶດຕິກຳຂອງເຂົາເຈົ້າ. ເຮົາອາດຈະເວົ້າຄຳວ່າ "ຂ້ອຍໃຫ້ອະໄພເຈົ້າ" ພຽງເພາະວ່າເຮົາບໍ່ຮູ້ຈະເວົ້າຫຍັງຢ່າງອື່ນ, ແຕ່ໃນຄວາມເປັນຈິງແລ້ວ ເຮົາຍັງບໍ່ໄດ້ໃຫ້ອະໄພຢ່າງແທ້ຈິງ ແລະເຕັມທີ່ຈົນກວ່າເຂົາເຈົ້າຈະພິສູດໃຫ້ເຫັນວ່າສົມຄວນໄດ້ຮັບມັນ. ເຮົາຈະຄອຍສັງເກດເບິ່ງເຂົາເຈົ້າຢ່າງໃກ້ຊິດ ເພື່ອເບິ່ງວ່າເຂົາເຈົ້າໄດ້ປ່ຽນແປງຈາກພຶດຕິກຳເດີມໆທີ່ເຄີຍເຮັດມາກ່ອນຫຼືບໍ່. ແລະໃນທີ່ສຸດ, ຖ້າເຂົາເຈົ້າປ່ຽນແປງຕົນເອງໄດ້ແທ້, ເຮົາກໍຈະໃຫ້ອະໄພເຂົາເຈົ້າຢ່າງສົມບູນ. ນີ້ບໍ່ແມ່ນວິທີທີ່ພຣະເຈົ້າຊົງໃຫ້ອະໄພມະນຸດ. *ມີຫຍັງແດ່ທີ່ເຈົ້າດີໃຈທີ່ໄດ້ປະຖິ້ມໄວ້ທາງຫຼັງ?*

ພຣະຄັມພີກ່າວວ່າຢ່າງໃດ? (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

<u>ສຶກສາພຣະຄັມພີ</u>

<u>1. ເອເຟໂຊ 2:1-3</u> ພວກເຮົາໄດ້ຕາຍແລ້ວໃນຄວາມຜິດບາບຂອງພວກເຮົາຖືກແຍກຈາກພຣະຄຣິດ.

1. "ໃນອະດີດຜ່ານມາ ພວກເຈົ້າໄດ້ຕາຍແລ້ວຝ່າຍຈິດວິນຍານ ຍ້ອນພວກເຈົ້າບໍ່ເຊື່ອຟັງ ແລະເຮັດບາບນາໆປະການ. 2. ໃນເວລານັ້ນ ພວກເຈົ້າໄດ້ປະຕິບັດຕາມທາງອັນຊົ່ວຊ້າແຫ່ງໂລກນີ້ ຄືພວກເຈົ້າເຊື່ອຟັງຕາມຜູ້ທີ່ມີອິດອຳນາດປົກຄອງຢູ່ໃນຍ່ານອາກາດ ຄືວິນຍານຊຶ່ງຄອບງຳຢູ່ໃນທ່າມກາງຜູ້ທີ່ບໍ່ເຊື່ອຟັງພຣະເຈົ້າ. 3. ແທ້ຈິງແລ້ວ, ພວກເຮົາທຸກຄົນເຄີຍດຳເນີນຊີວິດເໝືອນດັ່ງຄົນເຫຼົ່ານັ້ນ ຄືໄດ້ດຳເນີນຊີວິດຕາມກິເລດຕັນຫາທີ່ເຮົາຕ້ອງການ ຄືປະຕິບັດຕາມສິ່ງທີ່ຮ່າງກາຍແລະຈິດໃຈຂອງຕົນເອງປາຖະໜາຕາມສັນດານ ພວກເຮົາສົມຄວນຖືກພຣະເຈົ້າລົງໂທດເໝືອນດັ່ງຄົນອື່ນ."

ພຣະເຈົ້າບໍ່ໄດ້ລໍຖ້າໃຫ້ເຮົາປ່ຽນແປງກ່ອນ ຈຶ່ງຄ່ອຍໃຫ້ອະໄພເຮົາ; ເພາະຖ້າເປັນແນວນັ້ນມັນກໍປຽບເໝືອນຄຳຕັດສິນປະຫານຊີວິດທາງວິນຍານ. ຖ້າພຣະອົງບໍ່ໃຫ້ອະໄພເຮົາ, ເຮົາກໍບໍ່ສາມາດປ່ຽນແປງໄດ້. ຖ້າປາສະຈາກພຣະຄຣິດ, ເຮົາກໍຈະພິນາດ. ເຮົາບໍ່ແມ່ນພຽງແຕ່ເຈັບປ່ວຍຍ້ອນບາບເທົ່ານັ້ນ, ແຕ່ເຮົາໄດ້ຕາຍໄປແລ້ວໃນບາບຂອງເຮົາ. ໂປໂລໄດ້ກ່າວໄວ້ຢ່າງຊັດເຈນວ່າ: ກ່ອນທີ່ພວກເຮົາຈະໄດ້ພົບກັບພຣະຄຣິດ, ພວກຜູ້ເຊື່ອໄດ້ເຄີຍຕາຍທາງຝ່າຍວິນຍານແລ້ວ(ຂໍ້ 1). ບາງທີປະໂຫຍກທີ່ວ່າ "ພວກເຈົ້າໄດ້ຕາຍແລ້ວ" (2:1) ອາດຈະເຮັດໃຫ້ເຈົ້ານຶກເຖິງຖ້ອຍຄຳຂອງພໍ່ຜູ້ໜຶ່ງ ໃນຄຳອຸປະມາເລື່ອງລູກຊາຍທີ່ຫຼົງທາງໄປວ່າ: "ເພາະລູກຊາຍຄົນນີ້ຂອງພໍ່ໄດ້ຕາຍ

ໄປແລ້ວ ແລະ ກັບມີຊີວິດຂຶ້ນມາໃໝ່; ລາວໄດ້ຫຼົງຫາຍໄປ ແລະກໍພົບແລ້ວ" (ລູກາ 15:24ກ). ແນ່ນອນວ່າ ຄຳວ່າ "ພວກເຈົ້າໄດ້ເຄີຍຕາຍແລ້ວ" ນັ້ນ ໄດ້ອະທິບາຍເຖິງສະພາບຊີວິດທີ່ຕົກຕ່ຳ, ເປື້ອນເປິ ແລະໜ້າອັບອາຍ ທີ່ລູກຊາຍຄົນນັ້ນຕ້ອງປະເຊີນ ຫຼັງຈາກທີ່ລາວໃຊ້ເງິນຈົນໝົດກ້ຽງ. ລອງຈິນຕະນາການເບິ່ງວ່າຊາຍໜຸ່ມຊາວຢິວຄົນໜຶ່ງ ທີ່ກຳລັງດຳລົງຊີວິດຢູ່ຖ້ຳມກາງຝູງໝູ, ໂດຍປາຖະໜາຢາກກິນອາຫານທີ່ພວກມັນກິນນັ້ນ. ແຕ່ປະໂຫຍກທີ່ວ່າ "ເຈົ້າໄດ້ຕາຍໄປແລ້ວ" ກໍເປັນຄຳອະທິບາຍທີ່ເໝາະສົມສຳລັບຊີວິດທີ່ລາວໄດ້ດຳລົງຢູ່ໃນຕອນທີ່ລາວຍັງມີເງິນ. ເມື່ອລູກຊາຍຜູ້ຫຼົງຜິດໄດ້ອອກຈາກເຮືອນໄປໂດຍມີມໍລະດົກທີ່ໄດ້ຮັບລ່ວງໜ້າຢູ່ໃນກະເປົ໋າ, ລາວອາດຈະຄິດວ່າຕົນເອງກຳລັງໃຊ້ຊີວິດຢ່າງແທ້ຈິງ. ບໍ່ມີກົດລະບຽບ, ບໍ່ມີອ້າຍໃຫຍ່ທີ່ຄອຍບັງຄັບ, ແລະບໍ່ມີຂໍ້ຈຳກັດໃດໆ. ພຣະທຳລູກາ ລະບຸວ່າ ລາວໄດ້ "ເຜົາຜານຊັບສົມບັດຂອງຕົນໄປໃນການດຳລົງຊີວິດທີ່ໂງ່ງ່າວ" (ຂໍ້ 13), ແລະ ອ້າຍຂອງລາວກໍກ່າວວ່າ ພວກຍິງໂສເພນີໄດ້ "ກິນຟຸມເຟືອຍ" ຊັບສິນຂອງລາວໄປຈົນໝົດ (ຂໍ້ 30). ບໍ່ຕ້ອງສົງໄສເລີຍວ່າຊາຍໜຸ່ມຜູ້ນີ້ຄິດວ່າຕົນເອງກຳລັງໃຊ້ຊີວິດຢ່າງເຕັມທີ່ ໃນຂະນະທີ່ລາວໃຊ້ຈ່າຍເງິນທີ່ພໍ່ຂອງລາວຕ້ອງອົດທົນເຮັດວຽກຢ່າງໜັກເພື່ອຫາສ້າງມາ, ແຕ່ຄວາມຈິງແລ້ວບໍ່ແມ່ນແບບນັ້ນເລີຍ. ພຣະເຈົ້າບໍ່ໄດ້ລໍຖ້າໃຫ້ເຮົາປ່ຽນແປງຕົວເອງກ່ອນ ຈຶ່ງຄ່ອຍໃຫ້ອະໄພເຮົາ. ນີ້ບໍ່ແມ່ນເຫດການທີ່ເກີດຂຶ້ນພຽງຄັ້ງດຽວຫຼືກໍລະນີພິເສດເທົ່ານັ້ນ. ສັງຄົມຍອມຮັບການທີ່ຄົນໜຸ່ມສາວ "ປ່ອຍຕົວໃຊ້ຊີວິດຢ່າງຄຶກຄະນອງ" ໂດຍເຊື່ອວ່າເປັນວິທີໜຶ່ງໃນການປົດປ່ອຍຄວາມໂງ່ງ່າວອອກໄປ ກ່ອນທີ່ຈະຕັ້ງຫຼັກປັກຖານເພື່ອດຳລົງຊີວິດທີ່ດີງາມກວ່າ. ແນວຄິດນີ້ຂັດກັບຄຳແນະນຳໃນພຣະຄຳພີ ທີ່ສັ່ງໃຫ້ຫຼົບໜີຈາກ "ຕັນຫາຂອງຄົນໜຸ່ມ" (2 ຕີໂມທຽວ 2:22). ແທນທີ່ຈະປ່ອຍໃຫ້ຄວາມໂງ່ງ່າວສະແດງອອກມາຈົນໝົດໃນຊ່ວງໄວໜຸ່ມ, ຄົນໜຸ່ມສາວຄວນຈະຫຼົບໜີຈາກກັບດັກຂອງວິຖີທາງໂລກ. ເຖິງແມ່ນວ່າຈະເປັນຄວາມຈິງທີ່ວ່າ ຜູ້ທີ່ດຳລົງຊີວິດຕາມວິຖີທາງຂອງໂລກນັ້ນ ບໍ່ໄດ້ຢູ່ພາຍໃຕ້ການຄວບຄຸມຂອງຄອບຄົວຂອງພວກເຂົາ, ແລະ ພວກເຂົາອາດຈະຢູ່ໃນສະພາບທີ່ບໍ່ສາມາດຄວບຄຸມຕົນເອງໄດ້; ແຕ່ບໍ່ຕ້ອງສົງໄສເລີຍວ່າມີກຳລັງບາງຢ່າງທີ່ກຳລັງຄວບຄຸມພວກເຂົາຢູ່. ໂປໂລໄດ້ກ່າວເຖິງ ຊາຕານ ວ່າເປັນ "ວິນຍານທີ່ກຳລັງເຮັດວຽກຢູ່ໃນຜູ້ທີ່ບໍ່ເຊື່ອຟັງ" (ອຟຊ 2:2). ຊາຕານ ເຮັດວຽກຢູ່ໃນຕົວພວກເຂົາເພື່ອທຳລາຍພວກເຂົາເອງ. ອັກຄະສາວົກ ເປໂຕ ໄດ້ພັນລະນາເຖິງ ຊາຕານ ວ່າເປັນດັ່ງສິງໂຕທີ່ຮ້ອງແຜດສຽງ ແລະຄອຍຊອກຫາໂອກາດ ທີ່ກຳລັງຍ່າງວົນວຽນຢູ່ເພື່ອຈະກືນກິນຜູ້ຄົນ (1 ເປໂຕ 5:8). "ຄວາມປາຖະໜາຂອງເນື້ອໜັງ" ເປັນສິ່ງທີ່ຄວບຄຸມ "ຄົນທີ່ຕາຍແລ້ວແຕ່ຍັງຍ່າງຢູ່" (ອຟຊ 2:3). ຄວາມຢາກຂອງເນື້ອໜັງເປັນສິ່ງທີ່ຂັບເຄື່ອນພວກເຂົາ. ພວກເຂົາບໍ່ໄດ້ຄວບຄຸມຄວາມຄິດຂອງຕົນເອງ; ແຕ່ກົງກັນຂ້າມ, ຄວາມຄິດເຫຼົ່ານັ້ນກັບເປັນສິ່ງທີ່ຄວບຄຸມພວກເຂົາ. ພວກເຂົາເປັນບຸດທີ່ດຳລົງຊີວິດຢູ່ພາຍໃຕ້ພຣະພິໂລດຂອງພຣະເຈົ້າ (ໂຣມ 2:5). ເຖິງຢ່າງໃດກໍຕາມ, ຂໍໃຫ້ສັງເກດວ່າ ໂປໂລ ບໍ່ໄດ້ກ່າວວ່າ ພວກເຮົາ "ກຳລັງ" ຕາຍຢູ່ໃນການລ່ວງລະເມີດ ແລະບາບຂອງພວກເຮົາ; ແຕ່ທ່ານກ່າວວ່າ ພວກເຮົາ "ເຄີຍ" ຕາຍຢູ່ໃນສິ່ງເຫຼົ່ານັ້ນ. *ເຈົ້າຈະອະທິບາຍສະພາບທີ່ "ຕາຍທາງວິນຍານ" ໃຫ້ແກ່ຜູ້ທີ່ຍັງບໍ່ທັນເຊື່ອໃນພຣະເຢຊູຟັງໄດ້ແນວໃດ?*

2. <u>ເອເຟໂຊ 2:4-7</u> ພວກເຮົາຖືກເຮັດໃຫ້ມີຊີວິດໂດຍຜ່ານພຣະຄຣິດ.

4. "ແຕ່ດ້ວຍພຣະກະລຸນາປານີຂອງພຣະເຈົ້າທີ່ອຸດົມສົມບູນຫລາຍ ແລະດ້ວຍຄວາມຮັກຂອງພຣະອົງ ທີ່ມີຕໍ່ພວກເຮົາກໍໃຫຍ່ຫລວງ, 5. ເຖິງແມ່ນວ່າ ເມື່ອພວກເຮົາໄດ້ຕາຍແລ້ວຝ່າຍຈິດວິນຍານ ຍ້ອນພວກເຮົາບໍ່ເຊື່ອຟັງ ພຣະອົງກໍຍັງໄດ້ບັນດານໃຫ້ພວກເຮົາເປັນຄືນມາສູ່ຊີວິດກັບພຣະຄຣິດ ການທີ່ພວກເຮົາໄດ້ຮັບຄວາມລອດພົ້ນນັ້ນ ແມ່ນໂດຍພຣະຄຸນຂອງພຣະເຈົ້າ. 6. ແລະໄດ້ຊົງບັນດານໃຫ້ເຮົາເປັນຄືນມາດ້ວຍກັນກັບພຣະອົງ ແລະຊົງໂຜດໃຫ້ເຮົານັ່ງໃນສະຫວັນສະຖານ ດ້ວຍກັນກັບພຣະເຢຊູຄຣິດເຈົ້າ, 7. ເພື່ອໃນຄາວຕໍ່ໄປ ພຣະອົງຈະໄດ້ຊົງສຳແດງພຣະຄຸນອັນອຸດົມເຫລືອລົ້ນຂອງພຣະອົງ ຊຶ່ງພຣະອົງໄດ້ຊົງເມດຕາເຮົາທັ້ງຫລາຍໃນພຣະຄຣິດເຈົ້າເຢຊູ."

ພວກເຮົາບໍ່ພຽງແຕ່ມີກິ່ນອາຍແຫ່ງຄວາມຕາຍຕິດໂຕຢູ່ເທົ່ານັ້ນ, ແຕ່ພວກເຮົາຕາຍແລ້ວແທ້ໆ. ສະພາບຂອງພວກເຮົາແມ່ນໝົດຫວັງຢ່າງສິ້ນເຊີງ. ແຕ່ພຣະເຈົ້າໄດ້ເຂົ້າມາແຊກແຊງ ແລະ ບັນດານໃຫ້ພວກເຮົາມີຊີວິດຂຶ້ນມາໃໝ່ໃນພຣະຄຣິດ! ຖ້າປາສະຈາກພຣະອົງ, ພວກເຮົາກໍຄົງຈະສືບຕໍ່ຢູ່ໃນບາບຕໍ່ໄປ ເປັນຄືກັບຄົນຕາຍທີ່ຍ່າງໄປສູ່ຊີວິດນິລັນດອນ, ຊຶ່ງຢູ່ທີ່ນັ້ນພວກເຮົາຈະຕ້ອງໄດ້ຮັບໂທດປະຫານທາງວິນຍານ. ໃນອັນພິພາກສາ, ພວກເຮົາຈະຕ້ອງປະສົບກັບພຣະພິໂລດຂອງພຣະເຈົ້າຢ່າງເຕັມຂອບເຂດ ແລະ ຮັບໂທດຢ່າງຄົບຖ້ວນສຳລັບທາງເລືອກ ແລະ ການກະທຳຕ່າງໆຂອງພວກເຮົາ. ຖ້າປາສະຈາກພຣະເຈົ້າ, ສະພາບຂອງພວກເຮົາກໍໝົດຫວັງຢ່າງ

ສິ້ນເຊີງ. ບໍ່ມີທາງອອກໃດໆເລີຍ. ແຕ່ພຣະເຈົ້າ... ຕະຫຼອດທົ່ວທັງພຣະຄຳພີ, ທີ່ວ່າ "<u>ແຕ່ພຣະເຈົ້າ</u>" (but God) ໄດ້ຊີ້ໃຫ້ເຫັນເຖິງອຳ
ນາດຂອງພຣະເຈົ້າທີ່ເຂົ້າມາແຊກແຊງ ຫຼື ກະທຳການ. ຕົວຢ່າງບາງປະການມີດັ່ງນີ້: **1.** ລາບານ ໄດ້ຫຼອກລວງ ຢາໂຄບ, ແຕ່ພຣະ
ເຈົ້າຊົງສະຖິດຢູ່ກັບລາວ ແລະປົກປ້ອງລາວ (ປຖກ 31:5-7). **2.** ພວກອ້າຍຂອງ ໂຢເຊັບ ຕັ້ງໃຈກະທຳຕໍ່ລາວໃນທາງທີ່ຊົ່ວຮ້າຍ,
ແຕ່ພຣະເຈົ້າຊົງປ່ຽນສິ່ງນັ້ນໃຫ້ກາຍເປັນຜົນດີ (ປຖກ 50:20). 3. ຂ້າພະເຈົ້າອ່ອນແອ, <u>ແຕ່ພຣະເຈົ້າ</u>ຊົງເປັນກຳລັງຂອງຂ້າພະເຈົ້າ
(ພສສ 73:26). **4.** ການທົດລອງເກີດຂຶ້ນກັບທຸກຄົນ, <u>ແຕ່ພຣະເຈົ້າ</u>ຊົງສັດຊື່ທີ່ຈະຊົງເປີດທາງອອກໃຫ້ (1 ກຣທ 10:13). **5.** ພວກ
ເຂົາໄດ້ຕຶງພຣະຄຣິດໄວ້ເທິງໄມ້ກາງແຂນ, <u>ແຕ່ພຣະເຈົ້າ</u>ຊົງໃຫ້ພຣະອົງຟື້ນຄືນພຣະຊົນ (ກຈກ 13:29-30). **6.** ພວກເຮົາບໍ່ມີທາງ
ຊ່ວຍຕົນເອງໄດ້ເລີຍໃນບາບຂອງພວກເຮົາ, <u>ແຕ່ພຣະເຈົ້າ</u>ຊົງພິສູດວ່າພຣະອົງຮັກພວກເຮົາ ໂດຍການທີ່ພຣະຄຣິດໄດ້ສິ້ນພຣະຊົນເພື່ອ
ພວກເຮົາ (ໂຣມ 5:6-8). **7.** ພວກເຮົາເຄີຍຕາຍໄປແລ້ວໃນບາບຂອງພວກເຮົາ, <u>ແຕ່ພຣະເຈົ້າ</u>ຊົງໃຫ້ພວກເຮົາກັບມາມີຊີວິດຢູ່ຮ່ວມ
ກັບພຣະຄຣິດ (ອຟຊ 2:5). ບາງຄົນລັງເລໃຈທີ່ຈະເຊື່ອວ່າ ຍັງມີຄວາມຫວັງຢູ່. ເມື່ອພວກເຂົາເບິ່ງສະພາບຂອງຕົນເອງ, ພວກເຂົາກໍ
ຮູ້ວ່າຕົນເອງປຽບເໝືອນຄົນຕາຍທີ່ຍັງຍ່າງຢູ່ ແລະ ກຳລັງມຸ່ງໜ້າໄປສູ່ຄວາມພິນາດ. ພວກເຂົາຮູ້ວ່າຕົນເອງລົ້ມລະລາຍທາງວິນຍານ
ແລະ ບໍ່ມີສິ່ງໃດທີ່ຈະນຳມາຊຳລະໜີ້ສິນຂອງຕົນໄດ້. ແມ່ນແລ້ວ, ພວກເຮົາເປັນໜີ້ຢ່າງມະຫາສານ, ແຕ່ພຣະເຈົ້າຊົງເຕັມໄປດ້ວຍ
ຄວາມເມດຕາ. ພວກເຮົາຕົກຢູ່ໃນສະພາບທີ່ຕ້ອງການຄວາມຊ່ວຍເຫຼືອຢ່າງຍິ່ງ, ແຕ່ພຣະເຈົ້າກໍຊົງມີຄວາມຮັກອັນຍິ່ງໃຫຍ່ຕໍ່ພວກເຮົາ.
ພຣະເຈົ້າບໍ່ໄດ້ເຂົ້າມາແຊກແຊງໂດຍເບິ່ງທີ່ວ່າພວກເຮົາເປັນໃຜ. ພຣະເຈົ້າບໍ່ໄດ້ເຂົ້າມາແຊກແຊງຍ້ອນຄວາມດີ ຫຼືສັກກະຍະພາບຂອງ
ພວກເຮົາ. ພວກເຮົາເຄີຍຕາຍໄປແລ້ວໃນການລ່ວງລະເມີດ ແລະບາບຕ່າງໆຂອງພວກເຮົາ. ພຣະເຈົ້າໄດ້ເຂົ້າມາແຊກແຊງ ເນື່ອງ
ຈາກຄວາມເມດຕາອັນອຸດົມສົມບູນ ແລະຄວາມຮັກອັນຍິ່ງໃຫຍ່ຂອງພຣະອົງ (2:4). ພຣະອົງໄດ້ເຂົ້າມາແຊກແຊງໂດຍອີງ
ຕາມລັກສະນະແທ້ຈິງຂອງພຣະອົງເອງ. ພຣະເຈົ້າຊົງປ່ຽມລົ້ນໄປດ້ວຍຄວາມເມດຕາ. ຄວາມເມດຕານັ້ນໄຫຼອອກມາຈາກ
ຄວາມຮັກແລະຄວາມດີຂອງພຣະເຈົ້າ. ພຣະເຈົ້າບໍ່ໄດ້ຈ່າຍພຽງບາງສ່ວນ ແລ້ວປະໃຫ້ພວກເຮົາ-ຜູ້ທີ່ເຄີຍເປັນຄືກັບຄົນຕາຍ
ທີ່ຍ່າງໄດ້-ຕ້ອງມາຈ່າຍສ່ວນທີ່ເຫຼືອ. ພຣະອົງໄດ້ຈ່າຍລາຄາທັງໝົດຢ່າງຄົບຖ້ວນ. ເຖິງຢ່າງໃດກໍຕາມ, ພວກເຮົາບໍ່ພຽງແຕ່
ລອດພົ້ນຈາກການພິພາກສາໂດຍຜ່ານການຊ່ວຍເຫຼືອຂອງພຣະເຈົ້າເທົ່ານັ້ນ, ແຕ່ພວກເຮົາຍັງມີຊີວິດຢ່າງເຕັມປ່ຽມຮ່ວມກັບ
ພຣະຄຣິດອີກດ້ວຍ; ສິ່ງນີ້ເຮັດໃຫ້ພຣະເຈົ້າສາມາດ “ສະແດງໃຫ້ເຫັນເຖິງຄວາມຮັ່ງມີອັນປະມານບໍ່ໄດ້ແຫ່ງພຣະຄຸນຂອງ
ພຣະອົງ ຜ່ານທາງຄວາມເມດຕາທີ່ພຣະອົງມີຕໍ່ພວກເຮົາໃນພຣະເຢຊູຄຣິດ” (2:7). ພວກເຮົາຈະເປັນດັ່ງລາງວັນແຫ່ງໄຊ
ຊະນະທີ່ສະແດງເຖິງພຣະຄຸນຂອງພຣະເຈົ້າ ທັງໃນຊີວິດນີ້ແລະຕະຫຼອດນິລັນດອນ. ຄວາມລອດມອບຈຸດປະສົງໃຫ້ແກ່ຜູ້ທີ່
ມີຊີວິດໃໝ່ຮ່ວມກັບພຣະຄຣິດໃນເວລານີ້. *ເຈົ້າໄດ້ຮູ້ຈັກກັບພຣະເຢຊູຄຣິດເປັນຄັ້ງທຳອິດໄດ້ແນວໃດ?*

3. <u>ເອເຟໂຊ 2:8-10</u> ພວກເຮົາຖືກໂຜດໃຫ້ພົ້ນໂດຍພຣະຄຣິດເພື່ອເປົ້າໝາຍ.

*8. “ດ້ວຍວ່າ, ຊຶ່ງເຈົ້າທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ, ສິ່ງເຫຼົ່ານີ້ ບໍ່ແມ່ນພວກເຈົ້າເຮັດເອງ
ແຕ່ພຣະເຈົ້າຊົງປະທານໃຫ້. 9. ຄວາມພົ້ນນັ້ນ ບໍ່ແມ່ນໄດ້ມາຍ້ອນການປະຕິບັດຂອງພວກເຈົ້າເອງ ເພື່ອວ່າບໍ່ໃຫ້ຜູ້ໃດຜູ້ໜຶ່ງອວດໄດ້.
10. ເພາະວ່າ ເຮົາທັງຫລາຍເປັນສີພຣະຫັດຂອງພຣະອົງ ທີ່ຊົງສ້າງຂຶ້ນໃນພຣະຄຣິດເຈົ້າເຢຊູ ເພື່ອໃຫ້ປະກອບການດີ ຊຶ່ງພຣະເຈົ້າ
ໄດ້ຊົງຈັດຕຽມລ່ວງໜ້າໄວ້ກ່ອນແລ້ວ ເພື່ອໃຫ້ເຮົາທັງຫລາຍໄດ້ປະຕິບັດຕາມ.”*

ເນື່ອງຈາກວ່າໃນອະດີດພວກເຮົາເຄີຍຕາຍແລ້ວ ແລະ ໄດ້ກັບມາມີຊີວິດອີກຄັ້ງໃນພຣະຄຣິດ, ຈຶ່ງສະຫຼຸບໄດ້ວ່າ ພວກເຮົາບໍ່ສາມາດ
ເຮັດສິ່ງໃດເພື່ອໃຫ້ໄດ້ມາເຊິ່ງຄວາມລອດພົ້ນນັ້ນ. ຄົນຕາຍບໍ່ສາມາດກະທຳສິ່ງໃດໄດ້. ຄວາມລອດພົ້ນບໍ່ແມ່ນສິ່ງທີ່ພວກເຮົາຫາໄດ້ມາ
ດ້ວຍຕົນເອງ, ແມ່ນແຕ່ພຽງເລັກນ້ອຍກໍບໍ່ແມ່ນ. ຂໍຢ້ຳອີກຄັ້ງວ່າຄົນຕາຍບໍ່ສາມາດກະທຳສິ່ງໃດໄດ້ເລີຍ; ພວກເຂົາບໍ່ສາມາດເຮັດຫຍັງ
ໄດ້ທັງສິ້ນ, ຍິ່ງບໍ່ຕ້ອງເວົ້າເຖິງການກະທຳຄວາມດີ. ແລະ ໃນທາງຝ່າຍວິນຍານ, ກ່ອນທີ່ຈະມີພຣະຄຣິດ, ພວກເຮົາເຄີຍຕາຍຢູ່ໃນ
"ການລະເມີດແລະບາບ" ຕ່າງໆຂອງພວກເຮົາ (ຂໍ້ 1). ພວກເຮົາຜູ້ທີ່ໄດ້ກັບມາມີຊີວິດພ້ອມກັບພຣະຄຣິດນັ້ນ, ໄດ້ຮັບຄວາມລອດພົ້ນ

ໂດຍພຣະຄຸນຂອງພຣະເຈົ້າ. ພວກເຮົາບໍ່ໄດ້ຫາຄວາມລອດພົ້ນນີ້ມາດ້ວຍຕົນເອງ, ແມ່ນແຕ່ພຽງສ່ວນໜຶ່ງກໍບໍ່ແມ່ນ. ໂດຍຄວາມໝາຍແລ້ວ, ພຣະຄຸນໝາຍເຖິງການໄດ້ຮັບຄວາມໂປດປານທັງທີ່ພວກເຮົາບໍ່ສົມຄວນໄດ້ຮັບ. ເຊັ່ນດຽວກັບທີ່ພຣະເຈົ້າ "ເຕັມປ່ຽມໄປດ້ວຍຄວາມເມດຕາ" (ຂໍ້ 4), ຄວາມອຸດົມສົມບູນແຫ່ງພຣະຄຸນຂອງພຣະອົງກໍ "ບໍ່ສາມາດວັດແທກໄດ້" (ຂໍ້ 7). ຄວາມລອດພົ້ນເກີດຂຶ້ນໂດຍທາງພຣະຄຸນຜ່ານທາງຄວາມເຊື່ອ ແລະເປັນຂອງປະທານຈາກພຣະເຈົ້າ. ເຖິງແມ່ນວ່າຄວາມເຊື່ອຈະເປັນການຕອບສະໜອງຕໍ່ພຣະຄຸນຂອງພຣະອົງນັ້ນ ບໍ່ແມ່ນການກະທຳທີ່ເຮັດໃຫ້ເຮົາສົມຄວນໄດ້ຮັບຄວາມລອດ. ມັນເປັນສ່ວນໜຶ່ງຂອງຂອງປະທານທີ່ພຣະເຈົ້າປະທານໃຫ້ ເມື່ອພຣະອົງຊົງກະທຳໃຫ້ຜູ້ທີ່ຕາຍແລ້ວທາງວິນຍານ ກັບມາມີຊີວິດໃໝ່ຮ່ວມກັບພຣະຄຣິດ. ເນື່ອງຈາກຂໍ້ພຣະຄຳເຫຼົ່ານີ້ເປັນພື້ນຖານສຳຄັນໃນຄວາມເຂົ້າໃຈເລື່ອງຄວາມລອດ, ຜູ້ເຊື່ອຈຳນວນຫຼາຍຈຶ່ງຈື່ຈຳພຣະທຳ ອຟຊ 2:8-9 ໄດ້, ແຕ່ມີໜ້ອຍຄົນທີ່ຈະສາມາດຍົກຂໍ້ທີ 10 ຂຶ້ນມາອ້າງອີງໄດ້. ນີ້ເປັນເລື່ອງທີ່ໜ້າເສຍດາຍ, ເພາະຂໍ້ເຫຼົ່ານີ້ມີຄວາມກ່ຽວຂ້ອງກັນຢ່າງແໜ້ນແຟ້ນ ແລະ ບໍ່ສາມາດແຍກອອກຈາກກັນໄດ້ເມື່ອພິຈາລະນາຕາມບໍລິບົດ. ໃນຂະນະທີ່ຂໍ້ 8-9 ອະທິບາຍວ່າເຮົາໄດ້ຮັບຄວາມລອດ "ໂດຍພຣະຄຸນຜ່ານທາງຄວາມເຊື່ອ...ບໍ່ແມ່ນໂດຍການປະຕິບັດ," ຂໍ້ 10 ກໍອະທິບາຍເຖິງເຫດຜົນວ່າ ເປັນຫຍັງເຮົາຈຶ່ງໄດ້ຮັບຄວາມລອດ ນັ້ນກໍຄື: "ເພື່ອໃຫ້ປະກອບການດີ." ແຕ່ກ່ອນທີ່ຈະບອກເຖິງເຫດຜົນດັ່ງກ່າວ, ຂໍ້ 10 ໄດ້ເອີ້ນຜູ້ເຊື່ອວ່າເປັນ "ສິພຣະຫັດ" ຂອງພຣະເຈົ້າ. ຜູ້ຄົນມັກຈະວິຈານຮູບຮ່າງໜ້າຕາຂອງຕົນເອງ ຫຼືປາດຖະໜາຢາກໃຫ້ຕົນເອງສະຫຼາດກວ່າ ຫຼືມີຄວາມສາມາດຫຼາຍກວ່ານີ້. ຖ້າຫາກຄວາມຄິດໃນການວິຈານຕົນເອງນີ້ກາຍເປັນເລື່ອງທີ່ຮຸນແຮງເກີນໄປ, ມັນກໍອາດກາຍເປັນການວິຈານພຣະເຈົ້າໄດ້. ພຣະເຈົ້າຊົງຮູ້ດີວ່າພຣະອົງກຳລັງເຮັດຫຍັງ ໃນຕອນທີ່ພຣະອົງສ້າງເຮົາຂຶ້ນມາໃນຮູບແບບທີ່ເຮົາເປັນຢູ່ນີ້. ຜູ້ຂຽນພຣະທຳເພງສັນລະເສີນໄດ້ກ່າວເຖິງຕົນເອງວ່າຖືກສ້າງຂຶ້ນມາຢ່າງ "ອັດສະຈັນ ແລະຍອດຢ້ຽມ" ຫຼັງຈາກທີ່ໄດ້ໄຕ່ຕອງເບິ່ງວ່າ ພຣະເຈົ້າໄດ້ຖັກແສ່ວຮ່າງກາຍຂອງລາວຂຶ້ນມາໃນທ້ອງແມ່ແນວໃດ (ພສສ 139:13). ເຖິງແມ່ນວ່າແນວຄວາມຄິດນີ້ຈະເຕືອນໃຈເຮົາກ່ຽວກັບເລື່ອງເຫຼົ່ານີ້, ແຕ່ໃນບໍລິບົດຂອງຂໍ້ 10, ຄຳວ່າ "ສິພຣະຫັດ" ຂອງພຣະອົງນັ້ນ ມີຄວາມໝາຍກວ້າງກວ່າພຽງແຕ່ການທີ່ພຣະອົງຊົງສ້າງເຮົາຂຶ້ນມາ (ປຖກ 2:7). ມັນໝາຍເຖິງຄວາມລອດຂອງເຮົາ-ຊຶ່ງເປັນຫົວຂໍ້ຫຼັກຂອງຂໍ້ພຣະຄຳທີ່ກ່າວມາກ່ອນໜ້ານັ້ນ. **<u>ຄວາມລອດພົ້ນເກີດຂຶ້ນໂດຍພຣະຄຸນຜ່ານທາງຄວາມເຊື່ອ ແລະເປັນຂອງປະທານຈາກພຣະເຈົ້າ.</u>** ຈຸດປະສົງຂອງການຟື້ນຟູນີ້ ກໍເພື່ອໃຫ້ເຮົາສາມາດກະທຳ "ການດີທັ້ງຫຼາຍ ທີ່ພຣະເຈົ້າໄດ້ຕຽມໄວ້ລ່ວງໜ້າໃຫ້ເຮົາກະທຳ" (ອຟຊ 2:10). ມີເຫດຜົນທີ່ພຣະເຈົ້າບໍ່ໄດ້ຮັບເຮົາຂຶ້ນໄປເທິງສະຫວັນທັນທີທີ່ເຮົາກັບໃຈເຊື່ອ-ນັ້ນກໍເພາະວ່າ ພຣະອົງມີວຽກງານສະເພາະເຈາະຈົງໃຫ້ເຮົາເຮັດໃນໂລກນີ້. *ເຈົ້າຈະອະທິບາຍເຖິງຜົນງານການສ້າງຂອງພຣະເຈົ້າ ແລະຈຸດປະສົງທີ່ພຣະອົງມີຕໍ່ຊີວິດຂອງເຈົ້າແນວໃດ?*

<u>ນຳໃຊ້ໃນຊີວິດ</u>

ເຈົ້າເບິ່ງຕົວເອງວ່າເປັນຜົນງານຊິ້ນເອກຂອງພຣະເຈົ້າ ຜູ້ທີ່ກຳລັງທຸ່ມເທເຮັດວຽກທີ່ພຣະອົງໄດ້ສ້າງເຈົ້າຂຶ້ນມາເພື່ອເຮັດຕາມນັ້ນຢູ່ຫຼືບໍ່? ຈົ່ງເລືອກປະຕິບັດຕາມຂໍ້ໃດຂໍ້ໜຶ່ງດັ່ງຕໍ່ໄປນີ້:

ມຸມມອງຕໍ່ພຣະເຈົ້າ. ເຈົ້າເຄີຍຕອບສະໜອງດ້ວຍຄວາມເຊື່ອ ຕໍ່ພຣະຄຸນທີ່ພຣະເຈົ້າໄດ້ມອບໃຫ້ແກ່ເຈົ້າແລ້ວຫຼືຍັງ? ຖ້າເຈົ້າຍັງບໍ່ແມ່ນອນໃຫ້ໂອ້ລົມກັບຜູ້ນຳກຸ່ມຫຼືສິດຍາພິບານຂອງເຈົ້າເພື່ອຊ່ວຍເຈົ້າໃຫ້ເຮັດຕາມ.

ມຸມມອງຕໍ່ຕົນເອງ. ຈົ່ງໄຕ່ຕອງເບິ່ງວ່າ ພຣະເຈົ້າໄດ້ສ້າງເຈົ້າຂຶ້ນມາແນວໃດ-ທັງດ້ານບຸກຄະລິກກະພາບ, ສິ່ງທີ່ເຈົ້າມັກ ຫຼືມີໃຈຮັກທີ່ຈະເຮັດ, ແລະປະສົບການຕ່າງໆຂອງເຈົ້າ. ສິ່ງເຫຼົ່ານີ້ບໍ່ແມ່ນເລື່ອງບັງເອີນ, ແຕ່ມັນອາດຈະເປັນສິ່ງທີ່ພຣະອົງໄດ້ຕຽມໄວ້ໃຫ້ເຈົ້າເຮັດ.

ມຸມມອງຕໍ່ຜູ້ອື່ນ. ເປັນໄປໄດ້ບໍ່ວ່າ ວຽກງານດີໆທີ່ພຣະເຈົ້າຕຽມໄວ້ໃຫ້ເຈົ້ານັ້ນ ລວມໄປເຖິງການຊົງເອີ້ນໃຫ້ມາເປັນຜູ້ນຳໃນວຽກງານຮັບໃຊ້? ລອງປຶກສາຫາລືກັບສິດຍາພິບານຂອງເຈົ້າກ່ຽວກັບຄວາມເປັນໄປໄດ້ໃນເລື່ອງນີ້.

ອຸປຖຳໂດຍ ລາວຊາວເທີນບັບຕິສສັມພັນ https://ulsb.org/sunday-school-2/ **ແປໂດຍ PA**